ກະຊວງ... ...ເລກທີ
...ສຳຫຼັກ
ທີ 7288...
ວັນທີ 23 JAN 2013

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===00000===-----

ກະຊວງການເງິນ

ກົມພາສີ

ເລກທີ : 03629 /ກພສ

ນະຄອນຫຼວງວຽງຈັນ, ວັນທີ 18 JAN 2013

ຮຽນ : - ທ່ານ ຫົວໜ້າກົມຂົນສົ່ງ ກະຊວງໂຍທາທິການແລະຂົນສົ່ງ,

- ທ່ານ ຫົວໜ້າກົມການນຳເຂົ້າ-ສົ່ງອອກ ກະຊວງອຸດສາຫະກຳແລະການຄ້າ.

ເລື່ອງ : ການມອບສິດໃຫ້ແກ່ ຫົວໜ້າພະແນກຄຸ້ມຄອງການສົ່ງອອກ-ນຳເຂົ້າ ເຊັນບາງເອກະສານ : ໃບອະນຸຍາດຍົກເວັ້ນ ແລະ ຫຼຸດຜ່ອນພາສີ ແທນກົມພາສີ ເປັນການຊົ່ວຄາວຈົນກວ່າຈະມີການປ່ຽນແປງ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ເລກທີ 04/ສພຊ, ວັນທີ 20/12/2011.
- ອີງຕາມ ຂໍ້ຕົກລົງຂອງ ກົມພາສີ ເລກທີ 03416/ກພສ, ວັນທີ 11/01/2013.

ກົມພາສີ ຂໍແຈ້ງມາຍັງບັນດາທ່ານ ຊາບວ່າ : ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການ ແລະ ເປັນການປັບປຸງຂັ້ນຕອນດຳເນີນການຄົ້ນຄວ້າ ແລະ ອອກອະນຸຍາດການຍົກເວັ້ນ ແລະ ຫຼຸດຜ່ອນພາສີ ໃຫ້ມີຄວາມຄ່ອງຕົວ, ສະດວກວ່ອງໄວ ແລະ ສອດຄ່ອງຕາມລະບຽບກົດໝາຍ, ນັບແຕ່ວັນທີ 1 ກຸມພາ 2013 ເປັນຕົ້ນໄປ ແມ່ນມອບສິດໃຫ້ແກ່ ຫົວໜ້າພະແນກຄຸ້ມຄອງການສົ່ງອອກ-ນຳເຂົ້າ ເຊັນບາງເອກະສານ : ໃບອະນຸຍາດຍົກເວັ້ນ ແລະ ຫຼຸດຜ່ອນພາສີ ການນຳເຂົ້າພາຫະນະກົນຈັກໜັກ ແລະ ລົດຈັກ ແທນກົມພາສີເປັນການຊົ່ວຄາວຈົນກວ່າຈະມີການປ່ຽນແປງ, ການເຊັນອະນຸມັດເອກະສານດັ່ງກ່າວແມ່ນຈະໄດ້ນຳໃຊ້ກາປະທັບຂອງພະແນກ ແລະ ເຂົ້າເລກທີ ເລີ່ມຕົ້ນແຕ່ເລກທີ 0001/ກພສ.ຄສ-ນຂ, ສະນັ້ນ ຈຶ່ງຂໍແຈ້ງ ຊື່, ລາຍເຊັນ ແລະ ກາປະທັບຂອງພະແນກຄຸ້ມຄອງການສົ່ງອອກ-ນຳເຂົ້າ ກົມພາສີ ເພື່ອເປັນຕົວຢ່າງໃຫ້ຊາບຢ່າງເປັນທາງການ :

ຕົວຢ່າງກາປະທັບ

ກະຊວງການເງິນ ພະແນກ ຄຸ້ມຄອງການສົ່ງ ອອກ-ນຳເຂົ້າ ກົມພາສີ

ກະຊວງການເງິນ ພະແນກ ຄຸ້ມຄອງການສົ່ງ ອອກ-ນຳເຂົ້າ ກົມພາສີ

ດັ່ງນັ້ນ ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືຕາມທາງຄວນດ້ວຍ.

**ບ່ອນສົ່ງ :**

- ຄະນະນຳກະຊວງການເງິນ 1 ສະບັບ,
- ຫ້ອງການກະຊວງການເງິນ 1 ສະບັບ,
- ບັນດາກົມອ້ອມຂ້າງກະຊວງ 1 ສະບັບ,
- ບັນດາພະແນກອ້ອມຂ້າງກົມພາສີ 1 ສະບັບ,
- ບັນດາພາສີປະຈຳແຕ່ລະເຂດ 1 ສະບັບ.

ຫົວໜ້າກົມພາສີ

ກະຊວງການເງິນ ກົມພາສີ

ອາດສະພັງທອງ ສີພັນດອນ

...thsaphangthong SIPHANDONE